ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສໍານັກງານນາຍົກລັດຖະມົນຕີ ເລກທີ 218 / ນຍ

ນະຄອນຫຼວງວຽງຈັນ, ວັນທີ 19 ກໍລະກົດ 2005

# ດໍາລັດ

## ວ່າດ້ວຍການຄຸ້ມຄອງ ແລະ ນໍາໃຊ້ກາປະທັບ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2003;
- ອີງຕາມ ກົດໝາຍ ວ່າດ້ວຍທຸລະກິດ ສະບັບເລກທີ 03/94, ລົງວັນທີ 18 ກໍລະກົດ 1994;
- ອີງຕາມ ໃບສະເໜີ ຂອງ ທ່ານຫົວໜ້າທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ 13 /ທປຄ.ພນ, ລົງວັນທີ 04 ກໍລະກົດ 2005.

## ນາຍົກລັດຖະມົນຕີ ອອກດໍາລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດໍາລັດສະບັບນີ້ວາງອອກ ເພື່ອກໍານົດກ່ຽວກັບຮູບແບບ, ຂະໜາດ, ເນື້ອໃນການຄຸ້ມຄອງ ແລະ ນໍາໃຊ້ກາປະທັບ ໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 2. ຂອບເຂດການນໍາໃຊ້ ຂອງດໍາລັດ**

ດໍາລັດສະບັບນີ້ ກໍານົດກ່ຽວກັບກາປະທັບ ຂອງ ອົງການນິຕິບັນຍັດ, ອົງການບໍລິຫານ, ສານປະຊາຊົນ, ອົງການໄອຍະການປະຊາຊົນ, ອົງການຈັດຕັ້ງທາງສັງຄົມ, ອົງການຈັດຕັ້ງສາສະໜາ ແລະ ຫົວໜ່ວຍທຸລະກິດ; ໂດຍບໍ່ກວມເຖິງກາປະທັບ ຂອງ ອົງການຈັດຕັ້ງພັກ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ປະເພດກາປະທັບອື່ນໆ ເຊັ່ນ: ກາຈໍ້າຂາເຂົ້າ-ຂາອອກ, ກາລັບ, ກາດ່ວນ, ກາຊື່, ກາລາຍເຊັນ, ກາຈ່າຍແລ້ວ...

**ມາດຕາ 3. ຄວາມໝາຍ ຄວາມສຳຄັນຂອງກາປະທັບ**

ກາປະທັບໝາຍເຖິງຄຸນຄ່າທາງດ້ານກົດໝາຍຂອງບັນດາເອກະສານ ແລະ ສະແດງໃຫ້ເຫັນເຖິງໜ້າທີ່ ຂອບເຂດສິດ ຂອງບັນດາອົງການຈັດຕັ້ງ ແລະ ຕຳແໜ່ງຕ່າງໆ ທີ່ລະບຽບກົດໝາຍກຳນົດ. ດັ່ງນັ້ນ, ການຄຸ້ມຄອງ ແລະ ນຳໃຊ້ກາປະທັບ ຕ້ອງປະຕິບັດຢ່າງເຂັ້ມງວດ ແລະ ເປັນເອກະພາບກັນ ໃນຂອບເຂດທົ່ວປະເທດ ຕາມເນື້ອໃນທີ່ກຳນົດຢູ່ໃນດຳລັດສະບັບນີ້.

## ໝວດທີ II
## ປະເພດ, ຂະໜາດ ແລະ ເນື້ອໃນກາປະທັບ

**ມາດຕາ 4. ປະເພດ ແລະ ຂະໜາດກາປະທັບ ຂອງ ອົງການນິຕິບັນຍັດ, ອົງການບໍລິຫານ, ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ**

4.1 ກາປະທັບ ຂອງ ປະທານປະເທດ ແມ່ນກາມົນ, ເສັ້ນຜ່າໃຈກາງ 4,2 ຊັງຕີແມັດ;

4.2 ກາປະທັບ ຂອງ ປະທານສະພາແຫ່ງຊາດ ແມ່ນກາມົນ, ເສັ້ນຜ່າໃຈກາງ 4,1 ຊັງຕີແມັດ;

4.3 ກາປະທັບ ຂອງ ນາຍົກລັດຖະມົນຕີ ແມ່ນກາມົນ, ເສັ້ນຜ່າໃຈກາງ 4,0 ຊັງຕີແມັດ;

4.4 ກາປະທັບ ຂອງ ສຳນັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການທຽບເທົ່າກະຊວງ ທີ່ສັງກັດຢູ່ໃນໂຄງປະກອບກົງຈັກຂອງລັດຖະບານ, ບັນດາຄະນະກຳມະການແຫ່ງຊາດ ທີ່ລັດຖະບານສ້າງຕັ້ງຂຶ້ນ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການປົກຄອງຂັ້ນແຂວງ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຫ້ອງວ່າການສຳນັກງານປະທານປະເທດ, ຫ້ອງວ່າການສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການສະພາແຫ່ງຊາດ, ສະຖານເອກອັກຄະລັດຖະທູດ, ສະຖານກົງສູນໃຫຍ່ ແລະ ສຳນັກງານຜູ້ຕາງໜ້າ ສ.ປ.ປ. ລາວ ຢູ່ຕ່າງປະເທດ, ທະບອງ ແລະ ອົງການທີ່ມີຖານະທຽບເທົ່າທະບອງ ແມ່ນກາມົນ, ເສັ້ນຜ່າໃຈກາງ 3,8 ຊັງຕີແມັດ;

4.5 ກາປະທັບ ຂອງ ຫ້ອງການ, ກົມ, ຫົວໜ່ວຍບໍລິຫານ ຫຼື ຫົວໜ່ວຍວິຊາການທີ່ມີຖານະທຽບເທົ່າກົມ; ຫ້ອງການສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສານປະຊາຊົນ, ອົງການໄອຍະການປະຊາຊົນຂັ້ນແຂວງ ແລະ ຂັ້ນອຸທອນ; ອົງການປົກຄອງຂັ້ນເມືອງ ແມ່ນກາມົນ, ເສັ້ນຜ່າໃຈກາງ 3,6 ຊັງຕີແມັດ;

4.6 ກາປະທັບ ຂອງ ບັນດາພະແນກການສາຍຕັ້ງ ຂອງກະຊວງ, ອົງການທຽບເທົ່າກະຊວງ ປະຈຳອົງການປົກຄອງຂັ້ນແຂວງ ແມ່ນປະເພດກາມົນ ເສັ້ນຜ່າໃຈກາງ 3,5 ຊັງຕີແມັດ;

4.7 ກາປະທັບ ຂອງ ຫ້ອງວ່າການປົກຄອງຂັ້ນແຂວງ, ບັນດາພະແນກ ແລະ ຫ້ອງການຄຸ້ມຄອງຂະແໜງການ ທີ່ຂຶ້ນກັບແຂວງ, ນະຄອນ ແມ່ນປະເພດກາມົນ ເສັ້ນຜ່າໃຈກາງ 3,5 ຊັງຕີແມັດ;

4.8 ກາປະທັບ ຂອງ ບັນດາຫ້ອງການຄຸ້ມຄອງຂະແໜງການ ຂອງອົງການປົກຄອງຂັ້ນເມືອງ ແລະ ຫົວໜ່ວຍບໍລິຫານ ທີ່ມີຖານະທຽບເທົ່າຫ້ອງການຂອງເມືອງ; ໂຮງຮຽນວິຊາສະເພາະຂັ້ນກາງ ແລະ ຫົວໜ່ວຍວິຊາການ ທີ່ມີຖານະທຽບເທົ່າຫ້ອງການເມືອງ; ອົງການປົກຄອງຂັ້ນບ້ານ ແມ່ນກາມົນ, ເສັ້ນຜ່າໃຈກາງ 3,5 ຊັງຕີແມັດ;

4.9 ກາປະທັບ ຂອງ ໂຄງການ ຫຼື ການຈັດຕັ້ງອື່ນໆ (ນອກຈາກການຈັດຕັ້ງ ທີ່ໄດ້ກ່າວມາຂ້າງເທິງນັ້ນແລ້ວ) ທີ່ໄດ້ຮັບການສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມລະບຽບກົດໝາຍແລ້ວ ຖ້າມີຄວາມຈຳເປັນໃນການໃຊ້ກາປະທັບ ແມ່ນໃຫ້ນຳໃຊ້ກາມົນ, ເສັ້ນຜ່າໃຈກາງ 3,5 ຊັງຕີແມັດ.

**ມາດຕາ 5. ປະເພດ ແລະ ຂະໜາດກາປະທັບ ຂອງ ກຳລັງປະກອບອາວຸດ**

**5.1 ປະເພດ ແລະ ຂະໜາດກາປະທັບ ຂອງ ກຳລັງປ້ອງກັນຊາດ**

5.1.1 ກາປະທັບ ຂອງບັນດາກົມໃຫຍ່, ຫ້ອງການກະຊວງ ແລະ ວິທະຍາຄານປ້ອງກັນຊາດ ທີ່ຂຶ້ນກັບກະຊວງປ້ອງກັນປະເທດ ແມ່ນປະເພດກາມົນ, ເສັ້ນຜ່າໃຈກາງ 3,7 ຊັງຕີແມັດ;

5.1.2 ກາປະທັບ ຂອງກອງບັນຊາການເຂດທະຫານ, ກອງພົນ, ກອງພັນໃຫຍ່ເອກະລາດ, ກອງບັນຊາການທະຫານຂັ້ນແຂວງ; ສານທະຫານຂັ້ນສູງ, ອົງການໄອຍະການທະຫານຂັ້ນສູງ, ວິທະຍາຄານ, ໂຮງຮຽນ, ໂຮງໝໍ, ກົມກອງຫຼຸບເທົ່າ ທີ່ຂຶ້ນກັບກະຊວງໂດຍກົງ ແລະ ບັນດາກົມ, ຫ້ອງການທີ່ຂຶ້ນກັບພາກສ່ວນຕ່າງໆ ກຳນົດຢູ່ໃນຂໍ້ 5.1.1 ແມ່ນປະເພດກາມົນ, ເສັ້ນຜ່າໃຈກາງ 3,6 ຊັງຕີແມັດ;

5.1.3 ກາປະທັບ ຂອງບັນດາຫ້ອງການ, ກອງພັນໃຫຍ່ທີ່ຂຶ້ນກັບກອງພົນ, ໂຮງຮຽນ, ໂຮງໝໍ, ບັນດາຫ້ອງການເສນາ, ຫ້ອງການເມືອງ, ຫ້ອງການພະລາ, ຫ້ອງການ ແລະ ບໍລິຫານ, ກົມກອງຫຼຸບເທົ່າທີ່ຂຶ້ນກັບພາກສ່ວນຕ່າງໆ ກຳນົດຢູ່ໃນຂໍ້ 5.1.2 ແລະ ຫ້ອງການເມືອງ, ຫ້ອງການບໍລິຫານທີ່ຂຶ້ນກັບພາກສ່ວນຕ່າງໆ ກຳນົດຢູ່ໃນຂໍ້ 5.1.1 ແມ່ນປະເພດກາມົນ, ເສັ້ນຜ່າໃຈກາງ 3,5 ຊັງຕີແມັດ;

5.1.4 ກາປະທັບ ຂອງກອງບັນຊາການທະຫານເມືອງ, ກອງພັນນ້ອຍ, ບັນດາພະແນກ, ຂະແໜງ, ໂຮງຮຽນ, ໂຮງໝໍ ແລະ ກົມກອງຫຼຸບເທົ່າທີ່ຂຶ້ນກັບພາກສ່ວນຕ່າງໆ ກຳນົດຢູ່ໃນຂໍ້ 5.1.2 ແລະ ຂໍ້ 5.1.3 ແມ່ນກາມົນ, ເສັ້ນຜ່າໃຈກາງ 3,5 ຊັງຕີແມັດ.

**5.2 ປະເພດ ແລະ ຂະໜາດກາປະທັບ ຂອງ ກຳລັງປ້ອງກັນຄວາມສະຫງົບ**

5.2.1 ກາປະທັບ ຂອງຫ້ອງການກະຊວງ, ບັນດາກົມໃຫຍ່ ທີ່ຂຶ້ນກັບ ກະຊວງປ້ອງກັນຄວາມສະຫງົບ ແມ່ນປະເພດກາມົນ, ເສັ້ນຜ່າໃຈກາງ 3,7 ຊັງຕີແມັດ;

5.2.2 ກາປະທັບ ຂອງບັນດາກອງບັນຊາການ, ກົມ, ວິທະຍາຄານປ້ອງກັນຄວາມສະຫງົບ, ສູນຄົ້ນຄ້ວາ ແລະ ຫຼຸບເທົ່າ ທີ່ຂຶ້ນກັບກະຊວງປ້ອງກັນຄວາມສະຫງົບ ແມ່ນປະເພດກາມົນ, ເສັ້ນຜ່າໃຈກາງ 3,6 ຊັງຕີແມັດ;

5.2.3 ກາປະທັບ ຂອງບັນດາກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ, ໂຮງຮຽນຊັ້ນກາງ, ໂຮງໝໍ, ບັນດາກົມນ້ອຍທີ່ຂຶ້ນກັບກົມໃຫຍ່ ແລະ ຫຼຸບເທົ່າ ແມ່ນປະເພດກາມົນ, ເສັ້ນຜ່າໃຈກາງ 3,5 ຊັງຕີແມັດ;

5.2.4 ກາປະທັບຂອງບັນດາຫ້ອງການ, ກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນເມືອງ ທີ່ຂຶ້ນກັບກອງບັນຊາການປ້ອງກັນຄວາສະຫງົບ ຂັ້ນແຂວງ, ກອງພັນ ແລະ ພະແນກ ທີ່ຂຶ້ນກັບພາກສ່ວນຕ່າງໆ ທີ່ໄດ້ກຳນົດໄວ້ ຢູ່ໃນຂໍ້ 5.2.2 ແລະ ກາດ່ານສຳລັບກວດຄົນເຂົ້າ-ອອກເມືອງ ແມ່ນປະເພດກາມົນ ເສັ້ນຜ່າໃຈກາງ 3,4 ຊັງຕີແມັດ.

**ມາດຕາ 6. ປະເພດ ແລະ ຂະໜາດກາປະທັບ ຂອງ ຫົວໜ່ວຍທຸລະກິດ**

6.1 ກາປະທັບ ທີ່ລະບຸໄວ້ໃນ ພາກທີ II ໝວດທີ 1 ວ່າດ້ວຍນັກທຸລະກິດ ຂອງກົດໝາຍ ວ່າດ້ວຍທຸລະກິດ

ແມ່ນກາຮູບສີ່ລ່ຽມຕັ້ງແຈ ມີເສັ້ນຜ່າກາງທາງຕັ້ງ 3 ຊັງຕີແມັດ ແລະ ທາງນອນ 5 ຊັງຕີແມັດ;

6.2 ກາປະທັບ ຂອງຫົວໜ່ວຍທຸລະກິດທີ່ລະບຸໄວ້ໃນ ພາກທີ III ໝວດທີ 3 ຂອງກົດໝາຍ ວ່າດ້ວຍທຸລະກິດເຊັ່ນ: ວິສາຫະກິດສ່ວນບຸກຄົນ, ບໍລິສັດຫຸ້ນສ່ວນ, ບໍລິສັດຈຳກັດ, ບໍລິສັດມະຫາຊົນ ແລະ ສາຂາບໍລິສັດດັ່ງກ່າວ (ຖ້າມີ) ແມ່ນກາຮູບແປດລ່ຽມມົນທົນ ມີເສັ້ນຜ່າໃຈກາງທາງຕັ້ງ ແລະ ທາງນອນ 3,5 ຊັງ ຕີແມັດ;

6.3 ກາປະທັບ ຂອງຫົວໜ່ວຍທຸລະກິດທີ່ລະບຸໄວ້ໃນ ພາກທີ III ໝວດທີ 4 ຂອງ ກົດໝາຍ ວ່າດ້ວຍທຸລະກິດເຊັ່ນ: ວິສາຫະກິດຂອງລັດ, ລັດວິສາຫະກິດປະສົມ ຊຶ່ງແມ່ນທຶນຂອງລັດແຕ່ 51 % (ສ່ວນຮ້ອຍ) ຂຶ້ນໄປ ແມ່ນຮູບໄຂ່ ມີເສັ້ນຜ່າໃຈກາງທາງຕັ້ງ 3 ຊັງຕີແມັດ ແລະ ເສັ້ນຜ່າໃຈກາງທາງນອນ 5 ຊັງຕີແມັດ;

6.4 ກາປະທັບ ຂອງຫົວໜ່ວຍທຸລະກິດ ທີ່ລະບຸໄວ້ໃນ ພາກທີ III ໝວດທີ 5 ຂອງກົດໝາຍ ວ່າດ້ວຍທຸລະກິດເຊັ່ນ: ວິສາຫະກິດລວມໝູ່... ແມ່ນກາຮູບແປດລ່ຽມຍາວ ມີເສັ້ນຜ່າໃຈກາງທາງຕັ້ງແມ່ນ 3 ຊັງຕີແມັດ ແລະ ທາງນອນ 5 ຊັງຕີແມັດ.

**ມາດຕາ 7. ປະເພດ ແລະ ຂະໜາດກາປະທັບ ຂອງອົງການສາສະໜາຕ່າງໆ**

7.1 ກາປະທັບ ຂອງອົງການສາສະໜາຕ່າງໆ ຂັ້ນສູນກາງ ແມ່ນກາມົນ, ເສັ້ນຜ່າໃຈກາງ 3,6 ຊັງຕີແມັດ;

7.2 ກາປະທັບ ຂອງ ອົງການສາສະໜາຕ່າງໆ ຂັ້ນແຂວງ, ຂັ້ນເມືອງ; ຄະນະສຶກສາສົງ ຂັ້ນແຂວງ, ຄະນະອຳນວຍການໂຮງຮຽນປະລິຍັດຕິທຳ, ວິທະຍາໄລສົງ ແມ່ນກາມົນ, ເສັ້ນຜ່າໃຈກາງ 3,5 ຊັງຕີແມັດ;

7.3 ກາປະທັບ ຂອງ ອົງການສາສະໜາເຂດ, ໂຮງຮຽນມັດທະຍົມສຶກສາສົງ ແລະ ຄະນະສຶກສາສົງເຂດ ແມ່ນກາມົນ, ເສັ້ນຜ່າໃຈກາງ 3,5 ຊັງຕີແມັດ.

**ມາດຕາ 8. ປະເພດ ແລະ ຂະໜາດກາປະທັບ ຂອງອົງການຈັດຕັ້ງທາງສັງຄົມຕ່າງໆ**

ອົງການຈັດຕັ້ງທາງສັງຄົມແມ່ນບັນດາສະຫະສະມາຄົມ, ສະມາພັນ, ສະໂມສອນ, ສະມາຄົມ ຫຼື ກຸ່ມທຸລະກິດ ທີ່ອົງການຈັດຕັ້ງຂອງລັດກ່ຽວຂ້ອງອະນຸມັດໃຫ້ສ້າງຕັ້ງ ແລະ ເຄື່ອນໄຫວບົນພື້ນຖານລະບຽບກົດໝາຍ ຂອງລັດ ແລະ ກົດລະບຽບສະເພາະຂອງຕົນ.

8.1 ບັນດາອົງການຈັດຕັ້ງທາງສັງຄົມ ທີ່ເຄື່ອນໄຫວ ເພື່ອຈຸດປະສົງເຕົ້າໂຮມຄວາມສາມັກຄີ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ຊ່ວຍເຫຼືອສັງຄົມ, ເພື່ອພັດທະນາອາຊີບ ແລະ ບໍ່ຫວັງຜົນກຳໄລທາງດ້ານເສດຖະກິດເຊັ່ນ: ສະມາຄົມມິດຕະພາບ, ສະມາຄົມ ເພື່ອມະນຸດສະທຳ, ສະມາຄົມສັງຄົມສົງເຄາະ, ມູນນິທິ, ກອງທຶນຊ່ວຍເຫຼືອສັງຄົມ ແມ່ນກາມົນ ຂະໜາດເສັ້ນຜ່າກາງກາປະທັບ 3,5 ຊັງຕີແມັດ;

8.2 ບັນດາອົງການຈັດຕັ້ງທາງສັງຄົມ ທີ່ເຄື່ອນໄຫວ ເພື່ອຈຸດປະສົງເຕົ້າໂຮມຄວາມສາມັກຄີ, ຊ່ວຍເຫຼືອ ເຊິ່ງກັນ ແລະ ກັນ, ຊ່ວຍເຫຼືອສັງຄົມ, ເພື່ອພັດທະນາອາຊີບ ແລະ ບໍ່ຫວັງຜົນກຳໄລທາງດ້ານເສດຖະກິດ ແຕ່ພົວພັນ, ກ່ຽວຂ້ອງກັບທຸລະກິດການຄ້າ, ການບໍລິການເຊັ່ນ: ກຸ່ມທຸລະກິດ, ສະມາ

ພັນທຸລະກິດ, ສະມາຄົມນັກທຸລະກິດ, ສະມາຄົມຊາວຄ້າຂາຍ... ແມ່ນກາ 5 ຫຼ່ຽມ ຂະໜາດເສັ້ນຜ່າ ກາງກາປະທັບ 3,5 ຊັງຕີແມັດ.

**ມາດຕາ 9. ເນື້ອໃນກາປະທັບ ຂອງ ອົງການນິຕິບັນຍັດ, ອົງການບໍລິຫານ, ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ**

9.1 ກາປະທັບ ທີ່ລະບຸໄວ້ໃນຂໍ້ 4.1, 4.2 ແລະ 4.3 ຂອງ ມາດຕາ 4 ແມ່ນ:

- ວົງນອກເບື້ອງເທິງ: ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ຂັ້ນດ້ວຍກາດາວ 5 ແຈ;
- ວົງນອກເບື້ອງລຸ່ມ: ຊື່ຕຳແໜ່ງ;
- ໃຈກາງກາປະທັບ: ເຄື່ອງໝາຍຊາດ.

9.2 ກາປະທັບ ທີ່ລະບຸໄວ້ໃນຂໍ້ 4.4 ຂອງມາດຕາ 4 ແມ່ນ:

- ວົງນອກເບື້ອງເທິງ: ຊື່ຂອງອົງການ, ຂັ້ນດ້ວຍກາດາວ 5 ແຈ;
- ວົງນອກເບື້ອງລຸ່ມ: ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ, ປະທານສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ, ເຈົ້າແຂວງ, ເຈົ້າຄອງນະຄອນ... ຊຶ່ງເປັນຫົວໜ້າບໍລິຫານສູງສຸດຂອງອົງການຈັດຕັ້ງນັ້ນ.
- ໃຈກາງກາປະທັບ: ເຄື່ອງໝາຍຊາດ.

9.3 ກາປະທັບ ທີ່ລະບຸໄວ້ໃນຂໍ້ 4.5 ຂອງ ມາດຕາ 4 ແມ່ນ:

- ວົງນອກເບື້ອງເທິງ: ຊື່ອົງການ ທີ່ການຈັດຕັ້ງຂອງຕົນຂຶ້ນກັບ, ຂັ້ນດ້ວຍກາດາວ 5 ແຈ;
- ວົງນອກເບື້ອງລຸ່ມ: ຊື່ອົງການ ຫຼື ຕຳແໜ່ງຂອງຕົນ (ເຈົ້າເມືອງ, ຫົວໜ້າເທດສະບານ);
- ໃຈກາງກາປະທັບ: ເຄື່ອງໝາຍຊາດ.

9.4 ກາປະທັບ ທີ່ລະບຸໄວ້ໃນຂໍ້ 4.6 ຂອງມາດຕາ 4 ແມ່ນ:

- ວົງນອກເບື້ອງເທິງ: ຊື່ກະຊວງ, ອົງການທຽບເທົ່າກະຊວງ ທີ່ການຈັດຕັ້ງຂອງຕົນຂຶ້ນກັບ, ຂັ້ນດ້ວຍກາດາວ 5 ແຈ;
- ວົງນອກເບື້ອງລຸ່ມ: ຊື່ແຂວງ, ນະຄອນ;
- ໃຈກາງກາປະທັບ: ຊື່ພະແນກຂອງຕົນ.

9.5 ກາປະທັບ ທີ່ລະບຸໄວ້ໃນຂໍ້ 4.7 ຂອງມາດຕາ 4 ແມ່ນ:

- ວົງນອກອ້ອມຈອດດ້ວຍ:ຊື່ແຂວງ, ນະຄອນ ທີ່ອົງການຂອງຕົນຂຶ້ນກັບ, ຂັ້ນດ້ວຍກາດາວ 5 ແຈ;
- ໃຈກາງກາປະທັບ: ຊື່ອົງການຂອງຕົນ.

9.6 ກາປະທັບ ທີ່ລະບຸໄວ້ໃນຂໍ້ 4.8 ຂອງ ມາດຕາ 4 ແມ່ນ:

- ວົງນອກເບື້ອງເທິງ: ຊື່ແຂວງ, ນະຄອນ ຫຼື ຊື່ຂອງອົງການຂັ້ນແຂວງ ທີ່ອົງການຕົນຂຶ້ນກັບ, ຂັ້ນດ້ວຍກາ ດາວ 5 ແຈ;
- ວົງນອກເບື້ອງລຸ່ມ: ຊື່ເມືອງ, ເທດສະບານ;
- ໃຈກາງກາປະທັບ: ຊື່ອົງການ ຫຼື ຊື່ບ້ານ.

9.7 ກາປະທັບ ທີ່ລະບຸໄວ້ໃນຂໍ້ 4.9 ຂອງ ມາດຕາ 4 ແມ່ນ:

- ຂອບວົງມົນເບື້ອງເທິງ: ຊື່ອົງການຈັດຕັ້ງຂອງລັດທີ່ມີສິດອະນຸມັດສ້າງຕັ້ງ ຫຼື ຊື່ອົງການຈັດຕັ້ງລັດທີ່ຄຸ້ມຄອງໂດຍກົງ, ຂັ້ນດ້ວຍກາດາວ 5 ແຈ;
- ຂອບວົງມົນເບື້ອງລຸ່ມ: ຊື່ແຂວງ, ນະຄອນ, ເມືອງ, ເທດສະບານ ຫຼື ບ້ານ ທີ່ສຳນັກງານຂອງອົງການຈັດຕັ້ງ ຫຼື ໂຄງການນັ້ນຕັ້ງຢູ່;
- ໃຈກາງກາປະທັບ: ຊື່ໂຄງການ ຫຼື ການຈັດຕັ້ງຂອງຕົນ.

## ມາດຕາ 10. ເນື້ອໃນກາປະທັບ ຂອງ ກຳລັງປະກອບອາວຸດ

### 10.1 ເນື້ອໃນກາປະທັບ ຂອງ ກຳລັງປ້ອງກັນຊາດ

10.1.1 ກາປະທັບ ທີ່ໄດ້ລະບຸໄວ້ໃນຂໍ້ 5.1.1 ແລະ 5.1.2 ຂອງມາດຕາ 5 ແມ່ນ:
- ຂອບວົງມົນເບື້ອງເທິງ: ກະຊວງປ້ອງກັນປະເທດ, ຂັ້ນດ້ວຍກາດາວ 5 ແຈ;
- ຂອບວົງມົນເບື້ອງລຸ່ມ: ຊື່ອົງການຈັດຕັ້ງຂອງຕົນ;
- ໃຈກາງກາປະທັບ: ເຄື່ອງໝາຍກອງທັບ.

10.1.2 ກາປະທັບ ທີ່ໄດ້ລະບຸໄວ້ໃນຂໍ້ 5.1.3 ແລະ 5.1.4 ຂອງ ມາດຕາ 5 ແມ່ນ:
- ຂອບວົງມົນເບື້ອງເທິງ: ຊື່ອົງການຂັ້ນເທິງ ຖັດອົງການຂອງຕົນຂຶ້ນກັບ, ຂັ້ນດ້ວຍກາດາວ 5 ແຈ;
- ຂອບວົງມົນເບື້ອງລຸ່ມ: ຊື່ອົງການຈັດຕັ້ງ ທີ່ຕົນຂຶ້ນກັບ;
- ໃຈກາງກາປະທັບ: ຊື່ອົງການຂອງຕົນ.

### 10.2 ເນື້ອໃນກາປະທັບ ຂອງ ກຳລັງປ້ອງກັນຄວາມສະຫງົບ

10.2.1 ກາປະທັບ ທີ່ໄດ້ລະບຸໄວ້ໃນ ຂໍ້ 5.2.1; 5.2.2 ແລະ 5.2.3 ຂອງມາດຕາ 5 ແມ່ນ:
- ຂອບວົງມົນເບື້ອງເທິງ: ກະຊວງປ້ອງກັນຄວາມສະຫງົບ, ຂັ້ນດ້ວຍກາດາວ 5 ແຈ;
- ຂອບວົງມົນເບື້ອງລຸ່ມ: ຊື່ອົງການຈັດຕັ້ງຂອງຕົນ;
- ໃຈກາງກາປະທັບ: ເຄື່ອງໝາຍປ້ອງກັນຄວາມສະຫງົບ.

10.2.2 ກາປະທັບ ທີ່ໄດ້ລະບຸໄວ້ໃນຂໍ້ 5.2.4 ຂອງ ມາດຕາ 5 ແມ່ນ:
- ຂອບວົງມົນເບື້ອງເທິງ: ກະຊວງປ້ອງກັນຄວາມສະຫງົບ, ຂັ້ນດ້ວຍກາດາວ 5 ແຈ;
- ຂອບວົງມົນເບື້ອງລຸ່ມ: ຊື່ອົງການຈັດຕັ້ງ ທີ່ຕົນຂຶ້ນກັບ;
- ໃຈກາງກາປະທັບ: ຊື່ອົງການຂອງຕົນ.

## ມາດຕາ 11. ເນື້ອໃນກາປະທັບ ຂອງຫົວໜ່ວຍທຸລະກິດ

11.1 ກາປະທັບ ທີ່ລະບຸໄວ້ໃນຂໍ້ 6.1 ຂອງ ມາດຕາ 6 ແມ່ນ:
- ຂອບວົງມົນເບື້ອງເທິງ: ຊື່ອົງການຈັດຕັ້ງຂອງລັດ ທີ່ອອກໃບອະນຸຍາດດຳເນີນທຸລະກິດ, ຂັ້ນດ້ວຍກາດາວ 5 ແຈ;
- ຂອບວົງມົນເບື້ອງລຸ່ມ: ຊື່ແຂວງ, ນະຄອນ ທີ່ສຳນັກງານຂອງວິສາຫະກິດນັ້ນຕັ້ງຢູ່;
- ໃຈກາງກາປະທັບ: ຊື່ຂອງວິສາຫະກິດ ຕາມທີ່ລະບຸໄວ້ໃນໃບທະບຽນວິສາຫະກິດ.

11.2 ກາປະທັບ ທີ່ໄດ້ລະບຸໄວ້ໃນຂໍ້ 6.2; 6.3 ແລະ 6.4 ຂອງ ມາດຕາ 6 ແມ່ນ:

- ຂອບວົງມົນເບື້ອງເທິງ: ຊື່ອົງການຈັດຕັ້ງຂອງລັດ ທີ່ອອກໃບອະນຸຍາດດຳເນີນທຸລະກິດ, ຂັ້ນດ້ວຍກາດາວ 5 ແຈ;
- ຂອບວົງມົນເບື້ອງລຸ່ມ: ຊື່ແຂວງ, ນະຄອນ ທີ່ສຳນັກງານຂອງວິສາຫະກິດນັ້ນຕັ້ງຢູ່;
- ໃຈກາງກາປະທັບ: ຊື່ຂອງວິສາຫະກິດ ຕາມທີ່ລະບຸໄວ້ໃນໃບທະບຽນວິສາຫະກິດ.

**ມາດຕາ 12. ເນື້ອໃນກາປະທັບ ຂອງ ອົງການສາສະໜາ**

ເນື້ອໃນກາປະທັບ ຂອງອົງການສາສະໜາ ແມ່ນໃຫ້ປະຕິບັດຕາມ ຂໍ້ກຳນົດ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ກາປະທັບ ຂອງອົງການພຸດທະສາສະໜາສຳພັນລາວ ແລະ ຂອງອົງການສາສະໜາອື່ນໆ ທີ່ພວມນຳໃຊ້ຢູ່ໃນປະຈຸບັນ ແລະ ຈົດທະບຽນແລ້ວ. ໂດຍມີເຄື່ອງໝາຍ ທີ່ເປັນເອກະລັກ ຂອງອົງການສາສະໜາຂອງຕົນ ຢູ່ໃນກາປະທັບ.

**ມາດຕາ 13. ເນື້ອໃນກາປະທັບ ຂອງ ອົງການຈັດຕັ້ງທາງສັງຄົມ**

13.1 ກາປະທັບ ຂອງ ອົງການຈັດຕັ້ງທາງສັງຄົມ ທີ່ໄດ້ລະບຸໄວ້ໃນ ຂໍ້ 8.1 ຂອງມາດຕາ 8 ແມ່ນ:

- ຂອບວົງມົນເບື້ອງເທິງ: ຊື່ອົງການຈັດຕັ້ງຂອງລັດ ທີ່ມີສິດອະນຸມັດສ້າງຕັ້ງ ຫຼື ຊື່ອົງການຈັດຕັ້ງລັດທີ່ຄຸ້ມຄອງໂດຍກົງ, ຂັ້ນດ້ວຍກາດາວ 5 ແຈ;
- ຂອບວົງມົນເບື້ອງລຸ່ມ: ຊື່ແຂວງ, ນະຄອນ, ເມືອງ, ເທດສະບານ ຫຼື ບ້ານທີ່ສຳນັກງານຂອງອົງການຈັດຕັ້ງທາງສັງຄົມນັ້ນຕັ້ງຢູ່;
- ໃຈກາງກາປະທັບ: ຊື່ຂອງອົງການຈັດຕັ້ງທາງສັງຄົມນັ້ນ.

13.2 ກາປະທັບ ຂອງ ອົງການສັງຄົມ ທີ່ໄດ້ລະບຸໄວ້ໃນ ຂໍ້ 8.2 ຂອງມາດຕາ 8 ແມ່ນ:

- ຂອບວົງມົນເບື້ອງເທິງ: ຊື່ອົງການຈັດຕັ້ງຂອງລັດ ທີ່ມີສິດອະນຸມັດສ້າງຕັ້ງ ຫຼື ຊື່ອົງການຈັດຕັ້ງລັດທີ່ຄຸ້ມຄອງໂດຍກົງ, ຂັ້ນດ້ວຍກາດາວ 5 ແຈ;
- ຂອບວົງມົນເບື້ອງລຸ່ມ: ຊື່ແຂວງ, ນະຄອນ , ເມືອງ, ເທດສະບານ ຫຼື ບ້ານ ທີ່ສຳນັກງານຂອງອົງການຈັດຕັ້ງທາງສັງຄົມນັ້ນຕັ້ງຢູ່;
- ໃຈກາງກາປະທັບ: ຊື່ຂອງອົງການຈັດຕັ້ງທາງສັງຄົມ.

## ໝວດທີ III
## ການຄຸ້ມຄອງ ແລະ ນຳໃຊ້ກາປະທັບ

**ມາດຕາ 14. ວຽກງານການຄຸ້ມຄອງ ແລະ ນຳໃຊ້ກາປະທັບ ໃຫ້ປະຕິບັດດັ່ງນີ້:**

14.1 ແຕ່ລະອົງການຈັດຕັ້ງ ຫຼື ຕຳແໜ່ງບໍລິຫານແຫ່ງລັດ ອະນຸຍາດໃຫ້ມີກາປະທັບພຽງໜ່ວຍດຽວ. ແຕ່ຖ້າມີຄວາມຈຳເປັນ ແລະ ຕ້ອງການຢາກມີກາປະທັບທີ່ເປັນປະເພດດຽວກັນ ແລະ ມີເນື້ອໃນຄືກັນຕື່ມອີກ ຕ້ອງໄດ້ຮັບອະນຸຍາດຢ່າງເປັນລາຍລັກອັກສອນ ຈາກອົງການຈັດຕັ້ງທີ່ກ່ຽວຂ້ອງ ແລະ ຕ້ອງມີເຄື່ອງໝາຍສະເພາະ ເພື່ອຈຳແນກກັບກາປະທັບໜ່ວຍກ່ອນທີ່ມີຢູ່ແລ້ວ;

14.2 ບັນດາອົງການຈັດຕັ້ງທີ່ເຮັດໜ້າທີ່ອອກໃບປະກາສະນີຍະບັດ, ບັດປະຈຳຕົວ, ອອກວີຊາ (*VISA*) ທີ່ມີການຕິດຮູບ ແມ່ນອະນຸຍາດໃຫ້ມີກາປະທັບຕື່ມອີກ, ເປັນປະເພດກາແຫ້ງ ຫຼື ກາຂະໜາດ

ນ້ອຍກວ່າໜ່ວຍເກົ່າ ເພື່ອຮັບໃຊ້ວຽກງານວິຊາສະເພາະຂອງຕົນ ແຕ່ກໍ່ຕ້ອງໄດ້ຮັບອະນຸຍາດຄວັດຢ່າງເປັນລາຍລັກອັກສອນ ຈາກອົງການທີ່ກ່ຽວຂ້ອງ ແລະ ເນື້ອໃນ ກໍ່ຕ້ອງຄືກັນກັບກາປະທັບໜ່ວຍທີ່ມີຢູ່ແລ້ວນັ້ນ;

14.3 ກາປະທັບແຕ່ລະໜ່ວຍເມື່ອຄວັດແລ້ວ ຕ້ອງໄດ້ຂຶ້ນທະບຽນ ແລະ ສຳເນົາຕົວຢ່າງນຳ ກະຊວງປ້ອງກັນຄວາມສະຫງົບ, ຕ້ອງຈ່າຍຄ່າທຳນຽມຢ່າງຄົບຖ້ວນ ຕາມທີ່ກະຊວງການເງິນກຳນົດ ແລະ ນຳໃຊ້ໄດ້ກໍ່ຕໍ່ເມື່ອໄດ້ຮັບໃບທະບຽນກາປະທັບແລ້ວ. ອົງການຈັດຕັ້ງທີ່ນຳໃຊ້ກາປະທັບໃໝ່ ຕ້ອງປະກາດແຈ້ງຂ່າວກ່ຽວກັບຮູບແບບກາປະທັບໃໝ່ຂອງຕົນ ໃນສື່ມວນຊົນຕ່າງໆ ຕາມຄວາມເໝາະສົມ;

14.4 ຜູ້ເປັນຫົວໜ້າອົງການ ຫຼື ການຈັດຕັ້ງຕ່າງໆ ມີຄວາມຮັບຜິດຊອບຕໍ່ກັບການຄຸ້ມຄອງ, ນຳໃຊ້ກາປະທັບຂອງອົງການ, ການຈັດຕັ້ງຂອງຕົນ. ກາປະທັບຕ້ອງເກັບມ້ຽນໃນຫ້ອງການ ແລະ ໃນບ່ອນທີ່ມີຄວາມປອດໄພ, ຕ້ອງໄດ້ຮັບການຄຸ້ມຄອງ, ປົກປັກຮັກສາເປັນຢ່າງດີ, ກໍລະນີມີຄວາມຈຳເປັນຕ້ອງການເອົາກາປະທັບຕິດຕົວໄປນຳ ເພື່ອແກ້ໄຂວຽກງານທີ່ຢູ່ຫ່າງໄກຈາກສຳນັກງານອົງການ ກໍ່ສາມາດເອົາໄປນຳໄດ້ ແຕ່ຕ້ອງຮັບຜິດຊອບທັງໝົດຕໍ່ຜົນເສຍຫາຍຕາມມາ (ຖ້າມີ);

14.5 ຜູ້ທີ່ຖືກມອບໝາຍໃຫ້ຄຸ້ມຄອງ, ປົກປັກຮັກສາກາປະທັບຂອງອົງການ ຕ້ອງເປັນຜູ້ທີ່ມີນ້ຳໃຈຮັບຜິດຊອບສູງຕໍ່ໜ້າກົດໝາຍ, ມີລະດັບວິຊາສະເພາະດ້ານວຽກງານສາລະບັນເອກະສານ, ເປັນຄົນທີ່ການຈັດຕັ້ງເຊື່ອໝັ້ນ ແລະ ໄວ້ວາງໃຈ. ຕ້ອງເກັບມ້ຽນກາປະທັບໄວ້ ໃນບ່ອນທີ່ໄດ້ກຳນົດ, ປົກປັກຮັກສາໃຫ້ດີ, ຮັບປະກັນບໍ່ໃຫ້ເປ່ເພ ຫຼື ປ່ຽນຮູບຊົງ; ຫ້າມບຸກຄົນ ຫຼື ການຈັດຕັ້ງອື່ນຢືມໃຊ້ໂດຍເດັດຂາດ;

14.6 ການຈ້ຳກາປະທັບໃສ່ເອກະສານຕ່າງໆ ຕ້ອງປະຕິບັດຢ່າງຖືກຕ້ອງຕາມລະບຽບກົດໝາຍກຳນົດ; ເວລາຈ້ຳກາປະທັບລົງໃສ່ເອກະສານ ຕ້ອງຮັບປະກັນໃຫ້ຈະແຈ້ງ, ຈ້ຳກາລົງໃສ່ເອກະສານ ໂດຍໃຫ້ກວມເອົາ 1/3 ຂອງລາຍເຊັນ ອຽງມາທາງເບື້ອງຊ້າຍມື; ຈ້ຳກາປະທັບ ເມື່ອມີລາຍເຊັນແລ້ວ, ຫ້າມເດັດຂາດບໍ່ໃຫ້ການຈັດຕັ້ງ ຫຼື ບຸກຄົນໃດຜະລິດ ແລະ ນຳໃຊ້ກາປະທັບປອມ; ຫ້າມຈ້ຳກາປະທັບ ກ່ອນລົງລາຍເຊັນ ຫຼື ບໍ່ມີລາຍເຊັນ ໃນເອກະສານທາງລັດຖະການ;

14.7 ກໍລະນີກາປະທັບເສຍຫາຍ (ຕົກເຮ່ຍ, ໄຟໄໝ້...) ອົງການຈັດຕັ້ງທີ່ເປັນເຈົ້າຂອງກາປະທັບ ຕ້ອງແຈ້ງໃຫ້ເຈົ້າໜ້າທີ່ປ້ອງກັນຄວາມສະຫງົບທັນທີ ແລະ ແຈ້ງໃຫ້ອົງການ ທີ່ອອກໃບອະນຸມັດກາປະທັບ ລົບລ້າງກາປະທັບທີ່ເສຍຫາຍນັ້ນ; ຫຼັງຈາກນັ້ນຈຶ່ງສະເໜີຂໍອະນຸມັດກາປະທັບໃໝ່;

14.8 ກາປະທັບທີ່ຫຼຸ້ຍຫ້ຽນ, ເປ່ເພ ຫຼື ການຈັດຕັ້ງມີການປ່ຽນແປງ ຫຼື ມີການປ່ຽນຊື່ ຕ້ອງປະກອບເອກະສານຄວັດກາປະທັບໃໝ່ ແລະ ຕ້ອງສົ່ງຄືນກາປະທັບໜ່ວຍເກົ່າໃຫ້ ກະຊວງປ້ອງກັນຄວາມສະຫງົບ;

14.9 ທຸກອົງການຈັດຕັ້ງທີ່ມີການນຳໃຊ້ກາປະທັບ ຕ້ອງອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືແກ່ເຈົ້າໜ້າທີ່ງ ກ່ຽວຂ້ອງ ໃນເວລາກວດກາການປະຕິບັດລະບຽບການຄຸ້ມຄອງ ແລະ ນຳໃຊ້ກາປະທັບ.

**ມາດຕາ 15. ສີນ້ຳມຶກ ຂອງ ກາປະທັບ**

15.1 ກາປະທັບທີ່ລະບຸໄວ້ໃນ ມາດຕາ 4, 5 ແລະ 7 ຂອງດຳລັດສະບັບນີ້ ແມ່ນໃຊ້ນ້ຳມຶກສີແດງ;

15.2 ກາປະທັບທີ່ລະບຸໄວ້ໃນ ມາດຕາ 6 ແລະ 8 ຂອງ ດຳລັດສະບັບນີ້ ແມ່ນໃຊ້ນ້ຳມຶກສີຟ້າ;

15.3 ສຳລັບສິນຈຳນົກ ທີ່ໃຊ້ກັບກາຊີ້ແຈ້ງ ທີ່ຈຳປະກອບກັບ ບັນດາກາປະທັບຕ່າງໆ ທີ່ກ່າວມາຂ້າງເທິງນັ້ນ ແມ່ນໃຫ້ເອົາຕາມສີຂອງກາປະທັບ ທີ່ກາຊີ້ແຈ້ງຈຳປະກອບນຳກາປະທັບນັ້ນ.

ມາດຕາ 16. ບັນດາອົງການຈັດຕັ້ງ ແລະ ຕຳແໜ່ງບໍລິຫານແຫ່ງລັດຂັ້ນຕ່າງໆ ເວລາໃດຫາກມີຂໍ້ຕົກລົງໃຫ້ຍຸບເລີກ, ແຍກອອກຈາກກັນ, ໂຮມເຂົ້າກັນ ຫຼື ເມື່ອສິ້ນສຸດພາລະໜ້າທີ່ ທີ່ໄດ້ມອບໝາຍໃຫ້ແລ້ວ, ຫົວໜ້າອົງການຈັດຕັ້ງນັ້ນ ຕ້ອງສົ່ງກາປະທັບຄືນໃຫ້ອົງການທີ່ອອກໃບທະບຽນນຳໃຊ້ກາປະທັບນັ້ນ (ສົ່ງໃຫ້ກະຊວງປ້ອງກັນຄວາມສະຫງົບ). ໃນກໍລະນີມີການຢຸດການນຳໃຊ້ກາປະທັບຊົ່ວຄາວ, ອົງການຈັດຕັ້ງທີ່ອອກຂໍ້ຕົກລົງສ້າງຕັ້ງ ຫຼື ອະນຸຍາດໃຫ້ນຳໃຊ້ກາປະທັບນັ້ນ ຕ້ອງຖອນກາປະທັບຄືນກ່ອນ ຈົນກວ່າຈະໄດ້ ຮັບອະນຸມັດໃຫ້ນຳໃຊ້ຄືນໃໝ່ ຈຶ່ງມອບຄືນໃຫ້.

## ໝວດທີ IV

## ໜ້າທີ່, ຂອບເຂດສິດ ແລະ ການແບ່ງຄວາມຮັບຜິດຊອບ ຂອງບັນດາກະຊວງ, ອົງການທຽບເທົ່າ ແລະ ອົງການປົກຄອງທ້ອງຖິ່ນ ໃນການຄຸ້ມຄອງ ແລະ ນຳໃຊ້ກາປະທັບ

**ມາດຕາ 17. ໜ້າທີ່ ແລະ ຂອບເຂດສິດ ຂອງ ບັນດາກະຊວງ, ອົງການທຽບເທົ່າ ແລະ ອົງການປົກຄອງທ້ອງຖິ່ນ**

1. ຄົ້ນຄວ້າອະນຸມັດໃຫ້ບັນດາການຈັດຕັ້ງໃນໂຄງປະກອບກົງຈັກ ແລະ ຕຳແໜ່ງບໍລິຫານຕ່າງໆ ຂອງຕົນ ລວມທັງອົງການຈັດຕັ້ງທາງສັງຄົມ ທີ່ຕົນໄດ້ສ້າງຕັ້ງຂຶ້ນ ແລະ ອົງການຈັດຕັ້ງ ທີ່ກ່ຽວຂ້ອງໄດ້ຮັບຮອງເອົາແລ້ວ, ມີກາປະທັບ ເພື່ອນຳໃຊ້ໃນວຽກງານທາງລັດຖະການ;
2. ສະເໜີເຖິງກະຊວງປ້ອງກັນຄວາມສະຫງົບ ຫຼື ອົງການທີ່ກ່ຽວຂ້ອງອື່ນໆ (ຖ້າຈຳເປັນ) ເພື່ອຂໍອະນຸມັດຄວັດ, ຂໍອະນຸຍາດນຳໃຊ້ ແລະ ຂຶ້ນທະບຽນກາປະທັບ ໃຫ້ແກ່ບັນດາການຈັດຕັ້ງ ແລະ ຕຳແໜ່ງຕ່າງໆ ຂອງຕົນ;
3. ຕິດຕາມ ແລະ ກວດກາການຄຸ້ມຄອງ ແລະ ນຳໃຊ້ກາປະທັບ ຂອງ ບັນດາການຈັດຕັ້ງ ແລະ ຕຳແໜ່ງຕ່າງໆ ຢູ່ໃນຄວາມຮັບຜິດຊອບຂອງຕົນ.

**ມາດຕາ 18. ການແບ່ງໜ້າທີ່ ແລະ ຄວາມຮັບຜິດຊອບ ໃຫ້ກະຊວງ, ອົງການ ຈຳນວນໜຶ່ງ**

**18.1 ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງ ກະຊວງປ້ອງກັນຄວາມສະຫງົບ**

1. ອອກໃບອະນຸມັດຄວັດ, ຄວັດ (ຜະລິດ), ຂຶ້ນທະບຽນ ແລະ ສຳເນົາຮູບແບບກາປະທັບ ຂອງແຕ່ລະອົງການຈັດຕັ້ງ ແລະ ຕຳແໜ່ງບໍລິຫານແຫ່ງລັດ ຂັ້ນຕ່າງໆ;
2. ເປັນເຈົ້າການໃນການຕິດຕາມ ແລະ ກວດກາບັນດາອົງການຈັດຕັ້ງ ແລະ ຕຳແໜ່ງບໍລິຫານແຫ່ງລັດຂັ້ນຕ່າງໆ ໃນຂອບເຂດທົ່ວປະເທດ ໃນການຄຸ້ມຄອງ ແລະ ນຳໃຊ້ກາປະທັບ;

**18.2 ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງ ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ**

1. ຄົ້ນຄວ້າຮ່າງນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ກາປະທັບ ຂອງ ສ.ປ.ປ. ລາວ ເພື່ອສະເໜີລັດຖະບານ ຫຼື ນາຍົກລັດຖະມົນຕີ ພິຈາລະນາ;

2. ຄົ້ນຄວ້າປະກອບຄຳເຫັນ ຕໍ່ການສະເໜີ ຂອງ ບັນດາອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງທາງສັງຄົມ ທັງພາຍໃນ ແລະ ຕ່າງປະເທດ ແລະ ອົງການຈັດຕັ້ງທາງສາສະໜາ ໃນການອະນຸມັດນຳໃຊ້ກາປະທັບ;
3. ສົມທົບກັບກະຊວງປ້ອງກັນຄວາມສະຫງົບ ໃນການຕິດຕາມ ແລະ ກວດກາການຄຸ້ມຄອງ ແລະ ນຳໃຊ້ກາປະທັບ ຂອງ ບັນດາອົງການຈັດຕັ້ງ ແລະ ຕຳແໜ່ງບໍລິຫານແຫ່ງລັດ.

**18.3 ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງ ກະຊວງການຄ້າ**

1. ຄົ້ນຄວ້າອອກໃບອະນຸຍາດ ໃຫ້ບັນດາຫົວໜ່ວຍທຸລະກິດ ທີ່ໄດ້ຂຶ້ນທະບຽນວິສາຫະກິດນຳຂະແໜງການຄ້າ ແລະ ບັນດາສະຫະສະມາຄົມ, ສະມາຄົມ ຫຼື ກຸ່ມທຸລະກິດ ກຳນົດຢູ່ໃນມາດຕາ 6 ແລະ ມາດຕາ 8 ຂໍ້ 8.2 ຂອງດຳລັດສະບັບນີ້;
2. ສະເໜີ ເຖິງກະຊວງປ້ອງກັນຄວາມສະຫງົບ ເພື່ອຂໍອະນຸມັດຄວັດ ແລະ ຂຶ້ນທະບຽນນຳໃຊ້ກາປະທັບ; ຕິດຕາມ ແລະ ກວດກາການຈັດຕັ້ງຕ່າງໆ ດັ່ງກ່າວນີ້ ໃນການຄຸ້ມຄອງ ແລະ ນຳໃຊ້ກາປະທັບ.

**18.4 ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງ ສູນກາງແນວລາວສ້າງຊາດ**

1. ຄົ້ນຄວ້າອະນຸມັດ ໃຫ້ບັນດາອົງການຈັດຕັ້ງທາງສາສະໜາ ທີ່ໄດ້ຮັບການສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມລະບຽບກົດໝາຍ ຂອງ ສ.ປ.ປ. ລາວ ມີກາປະທັບ ເພື່ອນຳໃຊ້ໃນສາສະນະກິດ ແລະ ນຳໃຊ້ໃນ ການພົວພັນວຽກງານທາງລັດຖະການ ກັບອົງການຈັດຕັ້ງຕ່າງໆ;
2. ສະເໜີເຖິງກະຊວງປ້ອງກັນຄວາມສະຫງົບ ຫຼື ອົງການທີ່ກ່ຽວຂ້ອງອື່ນໆ (ຖ້າຈຳເປັນ) ເພື່ອຂໍອະນຸມັດຄວັດ, ອະນຸຍາດນຳໃຊ້ ແລະ ຂຶ້ນທະບຽນກາປະທັບ ໃຫ້ບັນດາການຈັດຕັ້ງດັ່ງກ່າວນີ້; ຕິດຕາມ ແລະ ກວດກາການຄຸ້ມຄອງ ແລະ ນຳໃຊ້ກາປະທັບ ຂອງບັນດາອົງການຈັດຕັ້ງທາງສາສະໜາ.

**18.5 ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງ ກະຊວງການຕ່າງປະເທດ**

1. ຄົ້ນຄວ້າອະນຸມັດ ໃຫ້ບັນດາອົງການຈັດຕັ້ງສາກົນ ຫຼື ຕ່າງປະເທດ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດ *(NGOs)* ທີ່ເຄື່ອນໄຫວຢູ່ ສ.ປ.ປ. ລາວ ແລະ ຂອງ ສ.ປ.ປ. ລາວ ທີ່ເຄື່ອນໄຫວຢູ່ຕ່າງປະເທດ ໃຫ້ມີກາປະທັບ ເພື່ອນຳໃຊ້ໃນການພົວພັນວຽກງານທາງລັດຖະການ;
2. ສະເໜີເຖິງກະຊວງປ້ອງກັນຄວາມສະຫງົບ ຫຼື ອົງການທີ່ກ່ຽວຂ້ອງອື່ນໆ (ຖ້າຈຳເປັນ) ເພື່ອຂໍອະນຸມັດຄວັດ, ອະນຸຍາດນຳໃຊ້ ແລະ ຂຶ້ນທະບຽນກາປະທັບ ຂອງບັນດາອົງການຈັດຕັ້ງດັ່ງກ່າວ;
3. ຕິດຕາມ ແລະ ກວດກາການຄຸ້ມຄອງ ແລະ ນຳໃຊ້ກາປະທັບ ຂອງບັນດາການຈັດຕັ້ງທີ່ຢູ່ພາຍໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 19. ສຳລັບອົງການຈັດຕັ້ງສາກົນ ແລະ ຕ່າງປະເທດ**

19.1 ບັນດາສະຖານທູດ, ສະຖານກົງສູນ, ສຳນັກງານຜູ້ຕາງໜ້າຂອງອົງການຈັດຕັ້ງສາກົນ ແລະ ຕ່າງປະເທດ ປະຈຳຢູ່ ສ.ປ.ປ. ລາວ ແລະ ພາກສ່ວນອື່ນໆ ທີ່ຂຶ້ນກັບບັນດາອົງການຈັດຕັ້ງດັ່ງກ່າວນີ້ ກ່ອນຈະນຳໃຊ້ກາປະທັບຂອງຕົນ ຕ້ອງແຈ້ງສຳເນົາຕົວຢ່າງກາປະທັບ *(Specimen)* ດັ່ງກ່າວໃຫ້

ກະຊວງການຕ່າງປະເທດລ່ວງໜ້າ ແລ້ວຈຶ່ງໄປຂຶ້ນທະບຽນນຳໃຊ້ກາປະທັບຢູ່ທີ່ ກະຊວງປ້ອງກັນຄວາມສະຫງົບ;

19.2 ສຳລັບບັນດາອົງການຈັດຕັ້ງອື່ນໆ ທີ່ສັງກັດ ຫຼື ບໍ່ສັງກັດລັດຖະບານ ຂອງຕ່າງປະເທດ *(NGOs)* ມີຄວາມຕ້ອງການຢາກເອົາກາປະທັບຂອງຕົນ ເຂົ້າມານຳໃຊ້ຢູ່ໃນ ສ.ປ.ປ. ລາວ, ກ່ອນຈະນຳໃຊ້ຕ້ອງໄດ້ຂຶ້ນທະບຽນກາປະທັບ ພ້ອມທັງສຳເນົາຮູບແບບກາປະທັບ ຢູ່ທີ່ກະຊວງປ້ອງກັນຄວາມສະຫງົບ ສາກ່ອນ;

19.3 ບັນດາອົງການ ຫຼື ການຈັດຕັ້ງຂອງສາກົນ ແລະ ຕ່າງປະເທດ (ນອກຈາກອົງການຈັດຕັ້ງທາງການທູດ) ທີ່ຖືກາປະທັບມານຳ ເພື່ອນຳໃຊ້ຢູ່ ສ.ປ.ປ. ລາວ; ກ່ອນຈະນຳໃຊ້ກາປະທັບຂອງຕົນ ຕ້ອງແຈ້ງສຳເນົາຕົວຢ່າງກາປະທັບ *(Specimen)* ດັ່ງກ່າວ ໃຫ້ກະຊວງການຕ່າງປະເທດລ່ວງໜ້າ ແລ້ວຈຶ່ງໄປຂຶ້ນທະບຽນນຳໃຊ້ກາປະທັບຢູ່ກະຊວງປ້ອງກັນຄວາມສະຫງົບ.

**ມາດຕາ 20. ລະບຽບການປະກອບສຳນວນເອກະສານ ເພື່ອຂໍອະນຸມັດຄວັດ ແລະ ນຳໃຊ້ກາປະທັບ**

20.1 ການປະກອບເອກະສານ ເພື່ອຂໍອະນຸມັດຄວັດ ແລະ ນຳໃຊ້ກາປະທັບ ຂອງບັນດາອົງການຈັດຕັ້ງ ແລະ ຕຳແໜ່ງບໍລິຫານແຫ່ງລັດຂັ້ນຕ່າງໆ ປະກອບມີ: ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງ ຫຼື ການສ້າງຕັ້ງ ແລະ ໃບສະເໜີຂອງອົງການທີ່ມີສິດອຳນາດສ້າງຕັ້ງກົງຈັກການຈັດຕັ້ງນັ້ນ;

20.2 ສຳລັບບັນດາອົງການຈັດຕັ້ງສັງຄົມ ແລະ ການຈັດຕັ້ງທາງສາສະໜາ. ນອກຈາກຂໍ້ຕົກລົງສ້າງຕັ້ງ ແລະ ໃບສະເໜີຂໍອະນຸຍາດນຳໃຊ້ກາປະທັບແລ້ວ, ຕ້ອງມີກົດລະບຽບຂອງອົງການຈັດຕັ້ງຂອງຕົນ ທີ່ໄດ້ຮັບການຮັບຮອງ ຈາກອົງການຈັດຕັ້ງທີ່ມີສິດອຳນາດຕື່ມອີກ;

20.3 ບັນດາການຈັດຕັ້ງທາງເສດຖະກິດ ເຮັດໃບສະເໜີ ເຖິງຂະແໜງການຄ້າ ຂໍອະນຸຍາດມີກາປະທັບ ເພື່ອນຳໃຊ້ໃນວຽກງານລັດຖະການ ຕາມແບບຟອມ ທີ່ຂະແໜງການຄ້າກຳນົດ ແລະ ເອກະສານອື່ນໆ ຄັດຕິດ: ໃບທະບຽນວິສາຫະກິດ, ໃບທະບຽນອາກອນ ແລະ ໃບອະນຸຍາດດຳເນີນທຸລະກິດ ຈາກຂະແໜງການທີ່ກ່ຽວຂ້ອງ (ຖ້າເປັນວິສາຫະກິດ ທີ່ໄດ້ຮັບການສ້າງຕັ້ງຂຶ້ນໃໝ່ ບໍ່ມີໃບອະນຸຍາດດຳເນີນທຸລະກິດກໍ່ໄດ້), ໃບອະນຸຍາດຕັ້ງສຳນັກງານຜູ້ຕາງໜ້າວິສາຫະກິດ ຢູ່ ສ.ປ.ປ. ລາວ (ສຳລັບວິສາຫະກິດ ຂອງ ຕ່າງປະເທດ ຫຼື ວິສາຫະກິດ ຮ່ວມທຸລະກິດກັບຕ່າງປະເທດ) ຂະແໜງການຄ້າ ຕ້ອງອອກໃບອະນຸຍາດໃຫ້ພາຍໃນ 02 ວັນ ລັດຖະການ;

20.4 ກໍລະນີກາປະທັບ ຂອງ ບັນດາອົງການຈັດຕັ້ງ ຫຼື ຂອງຕຳແໜ່ງບໍລິຫານແຫ່ງລັດໃດໜຶ່ງ ເປ່ເພ ຫຼື ເສຍຫາຍ ໃຫ້ປະກອບເອກະສານອ້າງເຫດຜົນ ຫຼື ບົດລາຍງານ ກ່ຽວກັບສາເຫດທີ່ພາໃຫ້ມີການເປ່ເພ ຫຼື ເສຍຫາຍ ແລ້ວເຮັດໃບສະເໜີເຖິງກະຊວງປ້ອງກັນຄວາມສະຫງົບ ເພື່ອຂໍອະນຸຍາດຄວັດກາປະທັບໃໝ່ ໂດຍບໍ່ຈຳເປັນຕ້ອງປະກອບເອກະສານອື່ນໆ ຕື່ມອີກ;

20.5 ຖ້າປະກອບເອກະສານຖືກຕ້ອງ ແລະ ຄົບຖ້ວນແລ້ວ ກະຊວງປ້ອງກັນຄວາມສະຫງົບ ຕ້ອງຂຶ້ນທະບຽນ ແລະ ອອກໃບອະນຸຍາດນຳໃຊ້ກາປະທັບ ໃຫ້ສຳເລັດພາຍໃນ 30 ວັນ.

## ໝວດທີ V

## ວ່າດ້ວຍການຍ້ອງຍໍ ແລະ ປະຕິບັດວິໄນ

**ມາດຕາ 21.** ອົງການຈັດຕັ້ງ ຫຼື ບຸກຄົນໃດ ທີ່ມີຜົນງານດີເດັ່ນ ໃນການປະຕິບັດຕາມເນື້ອໃນ ຂອງ ດຳລັດ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ກາປະທັບ ສະບັບນີ້, ຈະໄດ້ຮັບການຍ້ອງຍໍ ຫຼື ຈະໄດ້ຮັບການປະຕິບັດນະໂຍບາຍດ້ວຍຮູບການຕ່າງໆ ທີ່ເໝາະສົມ ຕາມລະບຽບການລວມຂອງລັດ ວາງອອກ.

**ມາດຕາ 22.** ອົງການຈັດຕັ້ງ ຫຼື ບຸກຄົນໃດ ທີ່ມີການກະທຳທີ່ເປັນການລະເມີດຕໍ່ ເນື້ອໃນ ຂອງ ດຳລັດ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ກາປະທັບ ສະບັບນີ້ ຈະຖືກປະຕິບັດວິໄນ ຫຼື ຈະຖືກດຳເນີນຄະດີ ຕາມລະບຽບກົດໝາຍ ກຳນົດ.

## ໝວດທີ VI

## ບົດບັນຍັດສຸດທ້າຍ

**ມາດຕາ 23. ການຈັດຕັ້ງປະຕິບັດ**

23.1 ມອບໃຫ້ ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ, ກະຊວງປ້ອງກັນຄວາມສະຫງົບ ແລະ ກະຊວງການຄ້າ, ກະຊວງການຕ່າງປະເທດ, ສູນກາງແນວລາວສ້າງຊາດ ແນະນຳລະອຽດການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

23.2 ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງອື່ນໆ ທີ່ນຳໃຊ້ກາປະທັບ ມີໜ້າທີ່ຮັບຜິດຊອບປະຕິບັດຢ່າງເຂັ້ມງວດ ຕາມເນື້ອໃນຂອງດຳລັດສະບັບນີ້.

**ມາດຕາ 24.** ດຳລັດສະບັບນີ້ ມີຜົນສັກສິດນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດ ສະບັບເລກທີ 04/ນຍ, ລົງວັນທີ 07 ມັງກອນ 1998.

**ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ**

ບຸນຍັງ ວໍລະຈິດ